**<u>ຫນັງສືຢັ້ງຢືນການຕາຍ</u>** DEATH CERTIFICATE

ບ່ອນຈົດທະບຽນການເກີດ,ການຕາຍແລະແຕ່ງດອງຮັບຜິດຊອບ ອອກໃບລາຍເກີດ,ຫນັງສືຜົວເມັຍແລະຫນັງສືຢັ້ງຢືນການຕາຍໃຫ້. ຜູ້ອຳນວຍການຈັດງານສົບຈະແຈ້ງການຕາຍແລ້ວທ່ານຈະຂໍເອົາໃບຢັ້ງຢືນການຕາຍຈາກບ່ອນຈົດທະບຽນໄດ້ໃນອາທິດຕໍ່ໄປ.
(ຣາຄາ - ເຖິງວັນທີ ໑໔.໑໐.໘໔ - $ ໙.໐໐ ຕົ້ນສະບັບ ແລະ $໖.໐໐ ສຳລັບໃບສຳລອງ).ຫ້ອງການຈົດທະບຽນທ້ອງຖິ່ນຕັ້ງຢູ່ ຈຸດນີ້ ( ຫ້ອງການຈົດທະບຽນການເກີດ, ການຕາຍ ແລະແຕ່ງດອງຢູ່ເລກທີ ໕໐ 50 Bridge Street, Sydney, 2000 ໂທຣະສັບ ໒໕໐ ໑໒໐໔)ສຳລັບ Newcastle, Wollongong (Unanderra) ແລະເຂດນອກນັ້ນຢູ່ສານ.

**<u>ລາຍລະອຽດອື່ນໆ</u>** FURTHER INFORMATION

ທ່ານອາດມີຄຳຖາມອື່ນໆອີກທີ່ຢາກຖາມຕື່ມ: ພວກເຮົາຂໍແນະນຳທ່ານໃຫ້ສອບຖາມນຳທ່ານຫມໍຫລືພນັກງານປະຊາສົງເຄາະໂດຍໃຊ້ນາຍພາສາແພນກອະນາມັຍຜູ້ທີ່ຈະສາມາດແນະນຳທ່ານວ່າຈະເອົາລາຍລະອຽດອື່ນໆໄດ້ແນວໃດ.

This publication has been developed and translated by the Health Translations Service in consultation with the Social Workers Oncology Group and Trudy Coffey, the Chief Social Worker, Liverpool Hospital.
State Health Publication No. (HTS) 87-009.

ເບີໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣໃນສມຸດໂທຣະສັບເບິ່ງໃໝ່.

HTS 539
LAO

# ເມື່ອມີຍາດພີ່ນ້ອງຕາຍຢູ່ໂຮງພຍາບານ

## When a relative dies in hospital



Health Information and Translation Services
NSW Department of Health

ພວກເຮົາຂໍສະແດງຄວາມເສົ້າສລົດໃຈໃນການສູນເສັຍຂອງພວກທ່ານ. ພວກເຮົາຂໍໃຫ້ລາຍລະອຽດຕໍ່ລົງໄປນີ້ເພື່ອຊ່ວຍທ່ານໃນຍາມຍາກນີ້. ທ່ານຈະເອົາປຶ້ມນ້ອຍຫົວນີ້ເມືອບ້ານນຳກໍ່ໄດ້,ແລະຖ້າທ່ານກັບຄືນມາໂຮງຫມໍອີກ, ລາຍລະອຽດເພີ້ມເຕີມກໍ່ຈະມີໄວ້ໃຫ້ທ່ານໂດຍຜ່ານນາຍພາສາ.

<u>ພະແນກນາຍພາສາ</u> INTERPRETER SERVICE

ພະແນກນາຍພາສາບໍ່ເສັຍຄ່າແລະເຊື່ອໃຈໄດ້ມີໄວ້ສຳລັບທ່ານຢູ່ໂຮງຫມໍນີ້ເວລາໂມງຣາຊການ. ຂໍໃຫ້ສອບຖາມໂຮງຫມໍເພື່ອໃຫ້ຊ່ອຍຈັດນາຍພາສາມາໃຫ້ ໃຫ້ໄວເທົ່າທີ່ຈະໄວໄດ້, ຫລືວ່າທ່ານຈະໂທຣະສັບໄປຕິດຕໍ່ນາຍພາສາດ້ວຍຕົນເອງຕາມຫມາຍເລກຕໍ່ລົງໄປນີ້ :

| | | | |
|---|---|---|---|
| Sydney: | Northern Metropolitan Region | | 438 7560 |
| | Southern Metropolitan Region | | 516 6999 |
| | Western Metropolitan Region | | 633 5444 |
| Newcastle: | Hunter Region | (049) | 26 3533 |
| Wollongong: | Illawarra Region | (042) | 74 4211 |

<u>ສິ່ງທີ່ຈະປະຕິບັດ</u> WHAT TO DO

ເວລາຄົນເຈັບຕາຍຢູ່ໂຮງຫມໍ ທ່ານບໍ່ຕ້ອງເຮັດຫຍັງທັນທີໂລດ. ສົບຜູ້ຕາຍຈະໄດ້ຍ້າຍເອົາໄປໄວ້ໂຮງເຢັນຂອງໂຮງຫມໍແລະທ່ານຈະຂໍເບິ່ງຢູ່ບ່ອນນັ້ນກໍ່ໄດ້ຖ້າທ່ານຕ້ອງການ. ສົບຜູ້ຕາຍຈະຖືກຮັກສາໄວ້ຫັ້ນຈົນກ່ວາທ່ານຈະຕິດຕໍ່ຜູ້ອຳນວຍການຈັດງານສົບ. ທ່ານຈະປຶກສາເຣື່ອງຈັດຕຽມເອົາສົບໄປເພື່ອຈັດສົ່ງສະການຕາມຄວາມປະສົງຂອງທ່ານ (ເບິ່ງຕາມຂ້າງລຸ່ມນີ້ ).ການຍ້າຍສົບຈາກໂຮງຫມໍນີ້ຄວນຈະປຶກສາກັບຜູ້ອຳນວຍການຈັດງານສົບເວລາມີນາຍພາສາຢູ່ນຳ.

<u>ເຄື່ອງຂອງຂອງຜູ້ຕາຍ</u> BELONGINGS OF THE DECEASED

ຖ້າທ່ານຕ້ອງການທ່ານຈະເກັບເອົາເຄື່ອງຂອງຂອງຜູ້ຕາຍໄດ້ຈາກຫ້ອງນອນຂອງໂຮງຫມໍ. ຖ້າທ່ານມີຄວາມປະສົງຢາກປະເຄື່ອງເອ້ (ເຊັ່ນ ແຫວນແຕ່ງດອງ,ຕຸ້ມຫູ ... ) ນີ້ໄວ້ ທ່ານຄວນບອກໃຫ້ພນັກງານໂຮງຫມໍຮູ້ໃຫ້ໄວທີ່ສຸດ ທີ່ຈະໄວໄດ້.ໂຮງຫມໍຈະເອົາເຄື່ອງມີຣາຄານີ້ໄວ້ບ່ອນປອດພັຍຈຶ່ງຈະມອບໃຫ້ສເພາະແຕ່ຜູ້ທີ່ຖືກແຕ່ງຕັ້ງຕາມກົດຫມາຍ(ຜູ້ມີຫນ້າທີ່ປະຕິບັດ ຕາມທີ່ບົ່ງໄວ້ໃນພິນັຍກັມ.

<u>ສາເຫດຂອງການຕາຍ</u> CAUSE OF DEATH

ອັນນີ້ຈະປຶກສາໄດ້ກັບທ່ານຫມໍຜູ້ປິ່ນປົວຜູ້ຕາຍ. ນາຍພາສາຂອງພະແນກອະນາມັຍຈະຈັດມາໃຫ້ ທ່ານໄດ້. ບາງເທື່ອ, ຍ້ອນເຫດຜົນບາງຢ່າງ ທ່ານຫມໍອາດຕ້ອງການຜ່າຕັດເບິ່ງ. ເວລານັ້ນທ່ານຈະຖືກຂໍໃຫ້ເຊັນຫນັງສືໃຫ້ອະນຸຍາດ. ທ່ານອາດຈະຕ້ອງການປຶກສາກັບໂຮງຫມໍໂດຍໃຊ້ນາຍພາສາກໍ່ໄດ້.

<u>ການກວດຫາສາເຫດຂອງການຕາຍ</u> A POST MORTEM (AUTOPSY)

ການຜ່າຕັດນີ້ແມ່ນການກວດຂອງຜູ້ຊ່ຽວຊານເພື່ອເບິ່ງສ່ວນທາງໃນຂອງພາກສ່ວນຂອງຮ່າງກາຍ, ຮວມທັງການກວດໂດຍໃຊ້ເຄື່ອງຊ່ອງແລະອຸປະກອນຕ່າງໆຂອງຫ້ອງກວດເພື່ອແຈ້ງບອກສາເຫດຂອງການຕາຍ.

<u>ຜົນຂອງການກວດ</u> RESULT OF POST MORTEM

ຜົນຂອງການກວດຈະຈັດໄວ້ໃຫ້ທ່ານໂດຍພະແນກປົກຄອງຂອງໂຮງຫມໍ ຫລືໂດຍທ່ານຫມໍຜູ້ທຳການກວດຜູ້ຕາຍ. ໃຫ້ຜູ້ແປພາສາພະແນກອະນາມັຍສອບຖາມເອົາໃຫ້ທ່ານ.

<u>ຜູ້ອຳນວຍການຈັດງານສົບ - ສັບປະເຣີ</u> FUNERAL DIRECTORS (UNDERTAKER)

ທ່ານຕ້ອງຕິດຕໍ່ຫາຜູ້ອຳນວຍການຈັດງານສົບ,ຖ້າເປັນໄປໄດ້ ່ບອນຢູ່ໃກ້ບ່ອນທ່ານຢູ່.ຖ້າທ່ານບໍ່ຮູ້ວ່າຜູ້ອຳນວຍການຈັດງານສົບມີຢູ່ອຸ້ມທ່ານ ຫລືຖ້າທ່ານຕ້ອງການຄວາມຊ່ວຍເຫລືອຫລືລາຍລະອຽດຕ່າງໆ,ຂໍໃຫ້ນັດພົບກັບເຈົ້າຫນ້າທີ່ປະຊາສົງເຄາະແລະຜູ້ແປພາສາພະແນກອະນາມັຍ. ພວກເພິ່ນຈະຊ່ອຍຂີ້ສິນໃຈຂອງທ່ານ.
ທ່ານມີສິດເລືອກເອົາຜູ້ອຳນວຍການຈັດງານສົບຜູ້ທີ່ສາມາດຈັດພິທີຊາປະນະກິດສົບໄດ້ຕາມທີ່ທ່ານຕ້ອງການ,ຮວມທັງຄວາມຕ້ອງການດ້ານສາສນາຈົນຮອດສົ່ງສົບໄປຕ່າງປະເທດ.

ຜູ້ອຳນວຍການຈັດງານສົບຈະເຄື່ອນຍ້າຍສົບພ້ອມທັງຈັດເອກະສານຕ່າງໆແລະຈັດຕຽມການຊາປະນະກິດສົບຕາມການຊີ້ນຳຂອງທ່ານ.

<u>ຣາຄາ</u> COST

ຜູ້ທີ່ຕິດຕໍ່ຫາຜູ້ອຳນວຍການຈັດງານສົບແລະສັ່ງຈັດພິທີຊາປະນະກິດສົບນັ້ນ ຕາມກົດຫມາຍແມ່ນເປັນຜູ້ຮັບຜິດຊອບຈ່າຍເງິນ. ຣາຄາແລະວິທີ ຈ່າຍນັ້ນຕ້ອງໄດ້ຕົກລົງກັບຜູ້ອຳນວຍການເອງ. ໃນສພາບທີ່ຂາດເຂີນ, ຂໍໃຫ້ຕິດຕໍ່ກັບພນັກງານປະຊາສົງເຄາະແລະນາຍພາສາພະແນກອະນາມັຍກໍ່ໄດ້.